ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 09 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ພະຈິກ 2016

# ກົດໝາຍ

# ວ່າດ້ວຍ ການກວດສອບແຫ່ງລັດ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການກວດສອບແຫ່ງລັດ ເພື່ອເຮັດໃຫ້ຫົວໜ່ວຍງົບປະມານ, ຫົວໜ່ວຍທຸລະກິດ ແລະ ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກຳໄລ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ, ມີປະສິດທິພາບ, ປະສິດທິຜົນ, ປະຢັດ, ແນໃສ່ສະກັດກັ້ນປາກົດການຫຍໍ້ທໍ້ທາງດ້ານ ການເງິນ ແລະ ງົບປະມານແຫ່ງລັດ, ປະກອບສ່ວນເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ມີຄວາມເຂັ້ມແຂງ, ໂປ່ງໃສ, ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ, ຊຸກຍູ້ການພັດທະນາເສດຖະກິດ- ສັງຄົມໃຫ້ຂະຫຍາຍຕົວ ແລະ ໝັ້ນຄົງ.

**ມາດຕາ 2 ການກວດສອບແຫ່ງລັດ**

ການກວດສອບແຫ່ງລັດ ແມ່ນ ຂະບວນການເຄື່ອນໄຫວເກັບກຳຂໍ້ມູນ ແລະ ຫຼັກຖານຕົວຈິງກ່ຽວກັບ ເປົ້າໝາຍຖືກກວດສອບ ຊຶ່ງດຳເນີນໂດຍອົງການກວດສອບແຫ່ງລັດ ແນໃສ່ຢັ້ງຢືນຄວາມຖືກຕ້ອງຂອງເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ, ປະສິດທິຜົນໃນການຄຸ້ມຄອງ, ການນຳໃຊ້ທຶນຮອນຂອງຫົວໜ່ວຍງົບປະມານ, ຫົວໜ່ວຍທຸລະກິດ ແລະ ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກຳໄລ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊັບສິນຂອງລັດ** ໝາຍເຖິງ ຊັບສິນ ທີ່ງົບປະມານແຫ່ງລັດສະໜອງໃຫ້ໂດຍກົງ ຫຼື ມີຕົ້ນກຳເນີດມາຈາກງົບປະມານແຫ່ງລັດ ແລະ ຊັບສິນອື່ນ ຊຶ່ງເປັນກຳມະສິດ ແລະ ຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາຂອງລັດ;

2. **ຫົວໜ່ວຍທຸລະກິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດຢູ່ ສປປ ລາວ;

3. **ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກຳໄລ** ໝາຍເຖິງ ການຈັດຕັ້ງສັງຄົມ, ມູນນິທິ ຫຼື ກອງທຶນຕ່າງໆ ທີ່ເຄື່ອນໄຫວຮັບໃຊ້ສາທາລະນະປະໂຫຍດ ຫຼື ຊ່ວຍເຫຼືອສັງຄົມ;

4. **ຄຳແນະນຳກວດສອບ** ໝາຍເຖິງ ຄຳເຫັນ ແລະ ວິທີການແກ້ໄຂ ຂອງອົງການກວດສອບແຫ່ງລັດ ຕໍ່ຂໍ້ຄົງຄ້າງ ຂອງເປົ້າໝາຍຖືກກວດສອບ;

5. **ຄະນະກວດສອບແຫ່ງລັດ** ໝາຍເຖິງ ໜ່ວຍງານກວດສອບຂອງລັດ ທີ່ຖືກແຕ່ງຕັ້ງໃຫ້ດຳເນີນການກວດສອບບັນດາຫົວໜ່ວຍງົບປະມານ, ຫົວໜ່ວຍທຸລະກິດ ແລະ ຫົວໜ່ວຍທີ່ບໍ່ສະແຫວງຫາຜົນກຳໄລ ທີ່ນຳໃຊ້ ງົບປະມານ, ເງິນ ແລະ ຊັບສິນຂອງລັດ;

6. **ບົດສະຫຼຸບຜົນການກວດສອບ** ໝາຍເຖິງ ຂໍ້ສະຫຼຸບຂອງອົງການກວດສອບແຫ່ງລັດ ທີ່ຕີລາຄາ ແລະ ຢັ້ງຢືນກ່ຽວກັບເນື້ອໃນທີ່ໄດ້ກວດສອບ;

7. **ຜູ້ຮ່ວມງານກວດສອບຂອງອົງການກວດສອບແຫ່ງລັດ** ໝາຍເຖິງ ວິສາຫະກິດກວດສອບ ທີ່ໄດ້ເຊັນສັນຍາກວດສອບ ກັບອົງການກວດສອບແຫ່ງລັດ ເພື່ອດຳເນີນການກວດສອບເປົ້າໝາຍຖືກກວດສອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້;

8. **ວິສາຫະກິດກວດສອບ** ໝາຍເຖິງ ວິສາຫະກິດ ທີ່ດຳເນີນທຸລະກິດກວດສອບ ຊຶ່ງໄດ້ຈົດທະບຽນ ແລະ ໄດ້ຂຶ້ນທະບຽນວິສາຫະກິດ ຢ່າງຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ;

9. **ວິສາຫະກິດຮັບເໝົາກໍ່ສ້າງໂຄງການລົງທຶນຂອງລັດ** ໝາຍເຖິງ ຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດການກໍ່ສ້າງ ແລະ ເຮັດສັນຍາຮ່ວມກັບພາກລັດ;

10. **ການລະເມີດທາງດ້ານບໍລິຫານ** ໝາຍເຖິງ ການລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບການບໍລິຫານ;

11. **ຈັນຍາບັນ** ໝາຍເຖິງ ຄຸນສົມບັດ, ຄວາມຮູ້, ຄວາມສາມາດຂອງນັກກວດສອບແຫ່ງລັດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດຕໍ່ການກວດສອບແຫ່ງລັດ**

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ມີການກວດສອບ ຢ່າງເປັນເອກະລາດ ແລະ ເຂັ້ມງວດ ຕໍ່ທຸກການເຄື່ອນໄຫວຂອງເປົ້າໝາຍຖືກກວດສອບ ເພື່ອໃຫ້ມີຄວາມໂປ່ງໃສ, ຖືກຕ້ອງຕາມກົດໝາຍ ແລະ ມີປະສິດທິຜົນ.

ລັດ ລົງທຶນພັດທະນາ ບຸກຄະລາກອນ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ, ສິ່ງປຸກສ້າງ, ສະໜອງ ພາຫະນະ, ອຸປະກອນ ແລະ ງົບປະມານ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດວຽກງານກວດສອບແຫ່ງລັດ.

**ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວກວດສອບແຫ່ງລັດ**

ການເຄື່ອນໄຫວກວດສອບແຫ່ງລັດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ເປັນເອກະລາດໃນເວລາດຳເນີນການກວດສອບ ແລະ ພິຈາລະນາຜົນຂອງການກວດສອບ;
2. ປະຕິບັດຕາມກົດໝາຍ ແລະ ນິຕິກຳອື່ນ;
3. ມີປະຊາທິປະໄຕ;
4. ມີຂໍ້ມູນຫຼັກຖານຕົວຈິງ;
5. ມີຄວາມໂປ່ງໃສ;
6. ມີຄວາມສັດຊື່ບໍລິສຸດ.

**ມາດຕາ 6 (ປັບປຸງ) ມາດຕະຖານການກວດສອບແຫ່ງລັດ**

ມາດຕະຖານການກວດສອບແຫ່ງລັດ ປະກອບດ້ວຍ:

1. ຫຼັກການເຄື່ອນໄຫວກວດສອບ;
2. ລະບຽບການກວດສອບ;
3. ຈັນຍາບັນ.

ສຳລັບເນື້ອໃນລະອຽດ ຂອງມາດຕະຖານການກວດສອບແຫ່ງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 7 ຄຸນປະໂຫຍດຂອງບົດສະຫຼຸບຜົນການກວດສອບແຫ່ງລັດ**

ບົດສະຫຼຸບຜົນການກວດສອບແຫ່ງລັດ ມີ ຄຸນປະໂຫຍດ ດັ່ງນີ້:

1. ສະພາແຫ່ງຊາດ ນຳໃຊ້ເປັນບ່ອນອີງເຂົ້າໃນການພິຈາລະນາ, ຮັບຮອງເອົາແຜນງົບປະມານແຫ່ງລັດ, ຕົວເລກແບ່ງປັນງົບປະມານແຫ່ງລັດ, ແຜນງານ ແລະ ໂຄງການ ຊຶ່ງມີຄວາມສຳຄັນລະດັບຊາດ ທີ່ນຳໃຊ້ງົບປະມານແຫ່ງລັດ, ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ນະໂຍບາຍການເງິນ-ເງິນຕາຂອງລັດ;
2. ອົງການບໍລິຫານ ແລະ ອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ ນຳໃຊ້ເປັນບ່ອນອີງເຂົ້າໃນການປັບປຸງວຽກງານບໍລິຫານ ແລະ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ເພື່ອໃຫ້ມີຄຸນນະພາບ;

3. ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ອົງການສືບສວນ-ສອບສວນນຳໃຊ້ເປັນຂໍ້ມູນ, ຫຼັກຖານໃນການດຳເນີນຄະດີ;

4. ອົງການຈັດຕັ້ງຄຸ້ມຄອງເປົ້າໝາຍຖືກກວດສອບ ນຳໃຊ້ເພື່ອສຶກສາອົບຮົມ ຫຼື ລົງວິໄນ ຕໍ່ການຈັດຕັ້ງ ຫຼື ບຸກຄົນທີ່ສັງກັດຢູ່ໃນເປົ້າໝາຍຖືກກວດສອບ;

5. ເປົ້າໝາຍຖືກກວດສອບ ນຳໃຊ້ເປັນບ່ອນອີງເພື່ອຢັ້ງຢືນ ແລະ ເສີມຂະຫຍາຍປະສິດທິຜົນຂອງການເຄື່ອນໄຫວ ແລະ ແກ້ໄຂຂໍ້ຄົງຄ້າງຂອງຕົນ.

**ມາດຕາ 8 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ:

1. ອົງການກວດສອບແຫ່ງລັດ;
2. ອົງການຈັດຕັ້ງ ຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ຊັບສິນຂອງລັດ;
3. ວິສາຫະກິດຮັບເໝົາກໍ່ສ້າງ ໂຄງການລົງທຶນຂອງລັດ;
4. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສ່ວນກ່ຽວຂ້ອງກັບການເຄື່ອນໄຫວວຽກງານກວດສອບແຫ່ງລັດ.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ຝຶກອົບຮົມ, ຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາຊີບກວດສອບ ເພື່ອພັດທະນາວຽກງານກວດສອບແຫ່ງລັດ ໃຫ້ມີຄວາມເຂັ້ມແຂງ ແລະ ທັນສະໄໝ, ປະຕິບັດສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການເຄື່ອນໄຫວກວດສອບແຫ່ງລັດ
### ໝວດທີ 1
### ຂັ້ນຕອນການກວດສອບແຫ່ງລັດ

**ມາດຕາ 10 ຂັ້ນຕອນການກວດສອບແຫ່ງລັດ**

ການກວດສອບແຫ່ງລັດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ບ່ອນອີງຂອງການອອກຂໍ້ຕົກລົງກວດສອບ;
2. ການຕົກລົງກວດສອບ;
3. ການແຈ້ງ ແລະ ຕອບຮັບ ຂໍ້ຕົກລົງກວດສອບ;
4. ການກະກຽມການກວດສອບ;

5. ການດຳເນີນການກວດສອບ;

6. ການສະຫຼຸບຜົນການກວດສອບ;

7. ການສົ່ງບົດສະຫຼຸບຜົນການກວດສອບ;

8. ການເປີດເຜີຍຜົນການກວດສອບ.

**ມາດຕາ 11 (ປັບປຸງ) ບ່ອນອີງຂອງການອອກຂໍ້ຕົກລົງກວດສອບ**

ການອອກຂໍ້ຕົກລົງກວດສອບແຫ່ງລັດ ອີງໃສ່:

1. ແຜນການກວດສອບປະຈຳປີ ຂອງອົງການກວດສອບແຫ່ງລັດ;

2. ມະຕິຂອງ ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

3. ຄຳສະເໜີ ຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ;

4. ຄຳສະເໜີຂອງອົງການຈັດຕັ້ງລັດ, ອົງການຄຸ້ມຄອງເປົ້າໝາຍຖືກກວດສອບ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ.

**ມາດຕາ 12 ການຕົກລົງກວດສອບ**

ການຕົກລົງກວດສອບ ໃຫ້ອອກເປັນຂໍ້ຕົກລົງກວດສອບ ຊຶ່ງມີເນື້ອໃນ ດັ່ງນີ້:

1. ບ່ອນອີງດ້ານກົດໝາຍ ເພື່ອດຳເນີນການກວດສອບ;

2. ຊື່ຂອງເປົ້າໝາຍຖືກກວດສອບ;

3. ຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນ ແລະ ຂອບເຂດຂອງການກວດສອບ;

4. ສະຖານທີ່ກວດສອບ;

5. ກຳນົດເວລາກວດສອບ;

6. ຄະນະກວດສອບແຫ່ງລັດ.

ໃນເວລາດຳເນີນການກວດສອບ ຖ້າເຫັນວ່າມີຄວາມຈຳເປັນຕ້ອງປ່ຽນແປງເນື້ອໃນ, ຂອບເຂດ, ສະຖານທີ່, ກຳນົດເວລາກວດສອບ ແລະ ຄະນະກວດສອບແຫ່ງລັດນັ້ນ ປະທານອົງການກວດສອບແຫ່ງລັດ ຕ້ອງມີຂໍ້ຕົກລົງເພີ່ມເຕີມຢ່າງເປັນທາງການ.

**ມາດຕາ 13 ການແຈ້ງ ແລະ ຕອບຮັບຂໍ້ຕົກລົງກວດສອບ**

ຂໍ້ຕົກລົງກວດສອບ ຕ້ອງແຈ້ງຢ່າງເປັນລາຍລັກອັກສອນ ໃຫ້ເປົ້າໝາຍຖືກກວດສອບ ຊາບກ່ອນລ່ວງໜ້າ ຍົກເວັ້ນ ກໍລະນີການກວດສອບແບບກະທັນຫັນ.

ເມື່ອເປົ້າໝາຍຖືກກວດສອບ ໄດ້ຮັບຂໍ້ຕົກລົງກວດສອບແລ້ວ ຕ້ອງຕອບຄືນຢ່າງເປັນລາຍລັກອັກສອນ ແລະ ແຕ່ງຕັ້ງຄະນະຮ່ວມເຮັດວຽກ ກັບຄະນະກວດສອບແຫ່ງລັດ ພາຍໃນກຳນົດເວລາ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບຂໍ້ຕົກລົງດັ່ງກ່າວເປັນຕົ້ນໄປ.

**ມາດຕາ 14 ການກະກຽມກວດສອບ**

ພາຍຫຼັງທີ່ມີການຕົກລົງກວດສອບຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ແລ້ວ ຄະນະກວດສອບແຫ່ງລັດ ຕ້ອງສົມທົບກັບເປົ້າໝາຍຖືກກວດສອບ ເພື່ອກະກຽມການກວດສອບຕາມເນື້ອໃນ ດັ່ງນີ້:

1. ສຳຫຼວດ, ເກັບກຳ ແລະ ລວບລວມຂໍ້ມູນກ່ຽວກັບສະພາບດ້ານການເງິນ, ລະບົບຄວບຄຸມພາຍໃນ ແລະ ຂໍ້ມູນອື່ນ ທີ່ພົວພັນເຖິງເປົ້າໝາຍຖືກກວດສອບ;

2. ຕີລາຄາລະບົບຄວບຄຸມພາຍໃນ ແລະ ຂໍ້ມູນທີ່ເກັບກຳໄດ້ ຂອງເປົ້າໝາຍທີ່ຈະຕ້ອງກວດສອບ ເພື່ອກຳນົດຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນ, ຂອບເຂດ ແລະ ວິທີການກວດສອບທີ່ເໝາະສົມ;

3. ສ້າງແຜນການກວດສອບລະອຽດ.

**ມາດຕາ 15 ການດຳເນີນການກວດສອບ**

ໃນການກວດສອບຄະນະກວດສອບແຫ່ງລັດ ຕ້ອງປະຕິບັດ ດັ່ງນີ້:

1. ດຳເນີນໃຫ້ຖືກຕ້ອງຕາມເນື້ອໃນຂໍ້ຕົກລົງກວດສອບ ແລະ ແຜນການກວດສອບລະອຽດ;
2. ໃຫ້ກວດສອບເອກະສານ ແລະ ລົງກວດສອບຕົວຈິງຢູ່ພາກສະໜາມ;
3. ດຳເນີນໃຫ້ຖືກຕ້ອງຕາມມາດຕະຖານການກວດສອບແຫ່ງລັດ.

**ມາດຕາ 16 ການສະຫຼຸບຜົນການກວດສອບ**

ເມື່ອສິ້ນສຸດການກວດສອບແລ້ວ ຄະນະກວດສອບແຫ່ງລັດ ຕ້ອງຮ່າງບົດບັນທຶກຜົນການກວດສອບແຫ່ງລັດສົ່ງໃຫ້ເປົ້າໝາຍຖືກກວດສອບ ມີຄຳເຫັນ ແລະ ຕອບເປັນລາຍລັກອັກສອນ, ຖ້າຫາກບໍ່ມີຄຳຕອບ ເປັນລາຍລັກອັກສອນ ພາຍໃນກຳນົດ ຊາວວັນ ນັບແຕ່ວັນໄດ້ຮັບຮ່າງບົດບັນທຶກ ດັ່ງກ່າວ ເປັນຕົ້ນໄປ ຖືວ່າເປົ້າໝາຍຖືກກວດສອບ ເຫັນດີນຳຮ່າງບົດບັນທຶກຜົນການກວດສອບນັ້ນ. ຈາກນັ້ນຄະນະກວດສອບແຫ່ງລັດ ຕ້ອງສ້າງບົດສະຫຼຸບຜົນການກວດສອບໃຫ້ຈະແຈ້ງກ່ຽວກັບການຕີລາຄາ ແລະ ການຢັ້ງຢືນເນື້ອໃນການກວດສອບ.

ບົດສະຫຼຸບຜົນການກວດສອບແຫ່ງລັດ ຕ້ອງລົງລາຍເຊັນ ແລະ ຢັ້ງຢືນ ໂດຍປະທານ, ຮອງປະທານ ອົງການກວດສອບແຫ່ງລັດ ຫຼື ປະທານອົງການກວດສອບປະຈຳພາກ ຫຼື ຫົວໜ້າ, ຮອງຫົວໜ້າກົມທີ່ກ່ຽວຂ້ອງ.

**ມາດຕາ 17 (ປັບປຸງ) ການສົ່ງບົດສະຫຼຸບຜົນການກວດສອບ**

ບົດສະຫຼຸບຜົນການກວດສອບແຫ່ງລັດ ໃຫ້ປະຕິບັດ ດັ່ງນີ້:

1. ຜົນການກວດສອບບົດສະຫຼຸບຂາດຕົວງົບປະມານແຫ່ງລັດປະຈຳປີ ຕ້ອງສົ່ງໃຫ້ປະທານປະເທດ, ນາຍົກລັດຖະມົນຕີ ເພື່ອລາຍງານ, ຈາກນັ້ນຈຶ່ງນຳສົ່ງໃຫ້ຄະນະປະຈຳສະພາແຫ່ງຊາດຢ່າງຊ້າບໍ່ໃຫ້ກາຍ ສິບຫ້າເດືອນ ນັບແຕ່ປີງົບປະມານແຫ່ງລັດສິ້ນສຸດລົງ;

2. ບົດສະຫຼຸບຜົນການກວດສອບຕາມຄຳສະເໜີ ຂອງການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງສົ່ງໃຫ້ການຈັດຕັ້ງທີ່ສະເໜີໃຫ້ກວດສອບ;

3. ບົດສະຫຼຸບຜົນການກວດສອບແບບກະທັນຫັນ ຕ້ອງສົ່ງໃຫ້ການຈັດຕັ້ງທີ່ສະເໜີໃຫ້ກວດສອບ.

ບົດສະຫຼຸບຜົນການກວດສອບແຕ່ລະຄັ້ງ ຕ້ອງສົ່ງໃຫ້ເປົ້າໝາຍຖືກກວດສອບ ແລະ ອົງການຄຸ້ມຄອງເປົ້າໝາຍຖືກກວດສອບນັ້ນ.

ບົດສະຫຼຸບການເຄື່ອນໄຫວປະຈຳປີ ຂອງອົງການກວດສອບແຫ່ງລັດ ຕ້ອງສົ່ງໃຫ້ ປະທານປະເທດ, ນາຍົກລັດຖະມົນຕີ ແລະ ຄະນະປະຈຳສະພາແຫ່ງຊາດ. ສຳລັບບົດສະຫຼຸບຜົນການກວດສອບຕາມ ຂໍ້ 2, ຂໍ້ 3 ເທິງນີ້ ແລະ ບົດສະຫຼຸບການເຄື່ອນໄຫວປະຈຳປີ ຂອງອົງການກວດສອບປະຈຳພາກ ຕ້ອງສົ່ງໃຫ້ອົງການກວດສອບແຫ່ງລັດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ທີ່ອົງການກວດສອບປະຈຳພາກຮັບຜິດຊອບ.

**ມາດຕາ 18 ການເປີດເຜີຍຜົນການກວດສອບ**

ຜົນການກວດສອບແຫ່ງລັດ ຈະສາມາດເປີດເຜີຍໄດ້ ກໍຕໍ່ເມື່ອໄດ້ລາຍງານ ແລະ ໄດ້ຮັບອະນຸຍາດຈາກການຈັດຕັ້ງລັດ ທີ່ມີສິດກ່ຽວຂ້ອງແລ້ວເທົ່ານັ້ນ. ການເປີດເຜີຍດຳເນີນດ້ວຍຮູບການ ດັ່ງນີ້:

1. ຈັດກອງປະຊຸມຂ່າວ;
2. ລົງໜັງສືພິມ, ຂ່າວສານ, ໂທລະພາບ, ວິທະຍຸ ແລະ ພາຫະນະສື່ມວນຊົນອື່ນ;
3. ລົງໃນເວັບໄຊ ຂໍ້ມູນ ຂ່າວສານຂອງອົງການກວດສອບແຫ່ງລັດ.

## ໝວດທີ 2
## ການແກ້ໄຂການລະເມີດ ແລະ ການກວດຄືນຜົນການກວດສອບ

**ມາດຕາ 19 (ປັບປຸງ) ການແກ້ໄຂການລະເມີດ**

ທຸກການກະທຳ ຊຶ່ງເປັນການລະເມີດກົດໝາຍ ທີ່ໄດ້ພົບເຫັນຈາກຜົນການກວດສອບແຫ່ງລັດ ຕ້ອງໄດ້ຮັບການແກ້ໄຂຢ່າງທັນເວລາ ແລະ ເຂັ້ມງວດ ດັ່ງນີ້:

1. ມີການລະເມີດທາງດ້ານບໍລິຫານນັ້ນ ອົງການກວດສອບແຫ່ງລັດ ມີສິດສະເໜີໃຫ້ອົງການຄຸ້ມຄອງເປົ້າໝາຍຖືກກວດສອບແກ້ໄຂຕາມ ມາດຕາ 69 ແລະ ມາດຕາ 70 ຂອງກົດໝາຍສະບັບນີ້;

2. ມີການລະເມີດທາງແພ່ງນັ້ນ ອົງການກວດສອບແຫ່ງລັດ ມີສິດສະເໜີໃຫ້ເປົ້າໝາຍຖືກກວດສອບ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ຫຼື ທຳການຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕາມກົດໝາຍ;

3. ມີການລະເມີດທາງອາຍານັ້ນ ອົງການກວດສອບແຫ່ງລັດ ຕ້ອງສົ່ງສຳນວນຜົນການກວດສອບ ໃຫ້ອົງການລັດທີ່ກ່ຽວຂ້ອງ ດຳເນີນຕາມຂັ້ນຕອນຂອງກົດໝາຍ.

ໃນກໍລະນີ ຫາກມີການລະເມີດວິໄນແຜນການ-ການເງິນນັ້ນ ອົງການກວດສອບແຫ່ງລັດ ສະເໜີ ໃຫ້ອົງການຄຸ້ມຄອງແຜນການ-ການເງິນ ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ອອກຄຳສັ່ງໃຫ້ງົດການເຄື່ອນໄຫວທາງການເງິນ ໃນລະບົບບັນຊີຂອງເປົ້າໝາຍຖືກກວດສອບ ແລະ ສັ່ງໃຫ້ ໂຈະ ຫຼື ຍົກເລີກ ການດຳເນີນໂຄງການທີ່ກ່ຽວຂ້ອງ.

**ມາດຕາ 20 (ປັບປຸງ) ການກວດຄືນຜົນການກວດສອບ**

ອົງການກວດສອບແຫ່ງລັດ ຕ້ອງດຳເນີນການກວດກາຄືນ ກ່ຽວກັບການຈັດຕັ້ງປະຕິບັດຄຳແນະນຳ ແລະ ຄຳສະເໜີແກ້ໄຂຜົນການກວດສອບ ເພື່ອຕີລາຄາສະພາບຄວາມເປັນຈິງ ໃນການຈັດຕັ້ງປະຕິບັດ ຜ່ານມາ ບົນພື້ນຖານການລາຍງານເປັນລາຍລັກອັກສອນ ຂອງເປົ້າໝາຍຖືກກວດສອບ.

ການກວດຄືນຜົນການກວດສອບ ຕ້ອງໄດ້ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ໂດຍແມ່ນຄະນະປະຈຳສະພາແຫ່ງຊາດ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຕົກລົງ.

## ໝວດທີ 3
## ຮູບການ, ປະເພດ, ເປົ້າໝາຍຖືກກວດສອບ, ກຳນົດເວລາ ແລະ ສະຖານທີ່ກວດສອບ

**ມາດຕາ 21 ຮູບການກວດສອບແຫ່ງລັດ**

ການກວດສອບແຫ່ງລັດ ມີ ສາມຮູບການ ດັ່ງນີ້:

1. ການກວດສອບຕາມແຜນການ;
2. ການກວດສອບຕາມຄຳສະເໜີ;
3. ການກວດສອບແບບກະທັນຫັນ.

ການກວດສອບຕາມແຜນການ ແມ່ນ ການກວດສອບທີ່ດຳເນີນໄປຕາມແຜນການ ທີ່ໄດ້ວາງໄວ້ ແລະ ມີກຳນົດເວລາອັນແນ່ນອນ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດສອບ ຊາບລ່ວງໜ້າ.

ການກວດສອບຕາມຄຳສະເໜີ ແມ່ນ ການກວດສອບທີ່ດຳເນີນຕາມຄຳສະເໜີ ຂອງອົງການທີ່ໄດ້ກຳນົດໄວ້ ໃນ ຂໍ້ 2, 3 ແລະ 4 ມາດຕາ 11 ຂອງກົດໝາຍສະບັບນີ້ ຫຼື ເປົ້າໝາຍຖືກກວດສອບ.

ການກວດສອບແບບກະທັນຫັນ ແມ່ນ ການກວດສອບໃນກໍລະນີທີ່ຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກກວດສອບແຫ່ງລັດຊາບລ່ວງໜ້າ.

**ມາດຕາ 22 ປະເພດການກວດສອບແຫ່ງລັດ**

ການກວດສອບແຫ່ງລັດ ມີ ສາມປະເພດ ດັ່ງນີ້:

1. ການກວດສອບເອກະສານລາຍງານການເງິນ;

2. ການກວດສອບຄວາມສອດຄ່ອງທາງດ້ານກົດໝາຍ;

3. ການກວດສອບຜົນການຈັດຕັ້ງປະຕິບັດ.

ອີງໃສ່ຈຸດປະສົງຂອງການກວດສອບແຕ່ລະຄັ້ງ ປະທານອົງການກວດສອບແຫ່ງລັດ ເປັນຜູ້ກໍານົດປະເພດການກວດສອບ ຊຶ່ງອາດຈະມີໜຶ່ງ ຫຼື ຫຼາຍປະເພດ ຕາມທີ່ໄດ້ກໍານົດໄວ້ໃນວັກໜຶ່ງຂອງມາດຕານີ້.

## ມາດຕາ 23 ການກວດສອບເອກະສານລາຍງານການເງິນ

ການກວດສອບເອກະສານລາຍງານການເງິນ ແມ່ນ ການກວດສອບບັນດາເອກະສານກ່ຽວກັບການເງິນປະຈໍາປີ ເຊັ່ນ ໃບສະຫຼຸບຊັບສົມບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດລວມ, ໃບລາຍງານ ສ່ວນປ່ຽນແປງຂອງທຶນຕົນເອງ ແລະ ເອກະສານອື່ນ ທີ່ພົວພັນກັບການກວດສອບເພື່ອຕີລາຄາ ແລະ ຢັ້ງຢືນ ລະດັບຄວາມຖືກຕ້ອງຕາມຕົວຈິງ, ຕາມກົດໝາຍ, ຕາມມາດຕະຖານການບັນຊີ ແລະ ຖານະການເງິນຂອງເປົ້າໝາຍຖືກກວດສອບ.

## ມາດຕາ 24 ການກວດສອບຄວາມສອດຄ່ອງທາງດ້ານກົດໝາຍ

ການກວດສອບຄວາມສອດຄ່ອງທາງດ້ານກົດໝາຍ ມີເນື້ອໃນ ດັ່ງນີ້:

1. ສະພາບການຈັດຕັ້ງປະຕິບັດຕາມກົດໝາຍ ເຊັ່ນ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ, ການບັນຊີ, ວິສາຫະກິດ, ທະນາຄານທຸລະກິດ, ພາສີ, ສ່ວຍສາອາກອນ, ອາກອນມູນຄ່າເພີ່ມ, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;

2. ສະພາບການຈັດຕັ້ງປະຕິບັດນິຕິກໍາຕ່າງໆ ແລະ ກົດລະບຽບພາຍໃນຂອງເປົ້າໝາຍຖືກກວດສອບ.

## ມາດຕາ 25 ການກວດສອບຜົນການຈັດຕັ້ງປະຕິບັດ

ການກວດສອບຜົນການຈັດຕັ້ງປະຕິບັດ ມີເນື້ອໃນ ດັ່ງນີ້:

1. ສະພາບການຈັດຕັ້ງປະຕິບັດຄາດໝາຍຂອງແຜນການ ແລະ ບົດວິພາກເສດຖະກິດ-ເຕັກນິກ ຫຼື ການວັດແທກໝາກຜົນຂອງການຈັດຕັ້ງປະຕິບັດວຽກງານ ໂດຍສົມທຽບໃສ່ຄາດໝາຍທີ່ໄດ້ວາງໄວ້;

2. ລະດັບການຮັບປະກັນການຄຸ້ມຄອງ ແລະ ການນໍາໃຊ້ຊັບພະຍາກອນ ແລະ ທ່າແຮງຕ່າງໆ ໃຫ້ມີ ປະສິດທິພາບ, ປະສິດທິຜົນ, ປະຢັດ, ຍືນຍົງ ແລະ ຮັກສາສິ່ງແວດລ້ອມ;

3. ປະສິດທິຜົນຂອງການຄວບຄຸມພາຍໃນ ຂອງເປົ້າໝາຍຖືກກວດສອບ;

4. ແຜນງານ, ໂຄງການ, ການເຄື່ອນໄຫວຕ່າງໆ ຂອງເປົ້າໝາຍຖືກກວດສອບ;

5. ຜົນກະທົບຂອງສະພາບແວດລ້ອມທາງນອກ ຕໍ່ບັນຫາເສດຖະກິດ ແລະ ປະສິດທິຜົນໃນການເຄື່ອນໄຫວຂອງເປົ້າໝາຍຖືກກວດສອບ.

**ມາດຕາ 26 (ປັບປຸງ) ເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບ ມີ ດັ່ງນີ້:

1. ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງອື່ນ ທີ່ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ເງິນ ແລະ ຊັບສິນຂອງລັດ;

2. ອົງການຈັດຕັ້ງການເມືອງ-ສັງຄົມ ທີ່ນຳໃຊ້ງົບປະມານແຫ່ງລັດ;

3. ກົມກອງ ທີ່ຂຶ້ນກັບກຳລັງປະກອບອາວຸດ;

4. ໂຄງການລົງທຶນຂອງລັດ ທີ່ນຳໃຊ້ທຶນມາຈາກງົບປະມານພາຍໃນ, ທຶນກູ້ຢືມ, ທຶນສົມທົບ ຫຼື ທຶນຊ່ວຍເຫຼືອລ້າຈາກພາຍໃນ ຫຼື ຕ່າງປະເທດ;

5. ທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດຂອງລັດ, ວິສາຫະກິດຂອງລັດ, ວິສາຫະກິດປະສົມ, ບໍລິສັດມະຫາຊົນ ແລະ ວິສາຫະກິດຮັບເໝົາກໍ່ສ້າງ ໂຄງການລົງທຶນຂອງລັດ;

6. ຫົວໜ່ວຍການບັນຊີ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ນາຍົກລັດຖະມົນຕີ.

**ມາດຕາ 27 ກຳນົດເວລາກວດສອບ**

ໃນການກວດສອບແຕ່ລະຄັ້ງ ປະທານອົງການກວດສອບແຫ່ງລັດ ເປັນຜູ້ກຳນົດເວລາກວດສອບ, ໃນກໍລະນີທີ່ການກວດສອບ ຫາກບໍ່ສຳເລັດກໍສາມາດຕໍ່ເວລາໄດ້ ແຕ່ສູງສຸດບໍ່ໃຫ້ເກີນ ສາມສິບວັນ.

**ມາດຕາ 28 ສະຖານທີ່ກວດສອບ**

ການກວດສອບ ຕ້ອງດຳເນີນຢູ່ສຳນັກງານ ຂອງເປົ້າໝາຍຖືກກວດສອບ. ໃນກໍລະນີທີ່ຈຳເປັນຈະກວດສອບ ຢູ່ນອກສະຖານທີ່ສຳນັກງານກໍໄດ້ ແຕ່ເປົ້າໝາຍຖືກກວດສອບ ຕ້ອງສົ່ງສຳນວນເອກະສານ ແລະ ຂໍ້ມູນຕ່າງໆທີ່ກ່ຽວຂ້ອງ ໄປໃຫ້ຄະນະກວດສອບແຫ່ງລັດ ຕາມການສະເໜີ.

## ພາກທີ III
## ອົງການກວດສອບແຫ່ງລັດ
### ໝວດທີ 1
### ລະບົບການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 29 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງອົງການກວດສອບແຫ່ງລັດ**

ອົງການກວດສອບແຫ່ງລັດ ແມ່ນ ອົງການດຳເນີນການກວດສອບການຄຸ້ມຄອງ, ການນຳໃຊ້ງົບປະມານ, ການເງິນ ແລະ ຊັບສິນຂອງລັດ, ຖືກສ້າງຕັ້ງ ຫຼື ຍຸບເລີກໂດຍສະພາແຫ່ງຊາດ, ເຄື່ອນໄຫວບົນ

ພື້ນຖານກົດໝາຍ, ມີພາລະບົດບາດກວດສອບ ບັນດາອົງການຈັດຕັ້ງຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້.

**ມາດຕາ 30 (ປັບປຸງ) ລະບົບການຈັດຕັ້ງຂອງອົງການກວດສອບແຫ່ງລັດ**

ລະບົບການຈັດຕັ້ງ ຂອງອົງການກວດສອບແຫ່ງລັດ ມີ:

- ອົງການກວດສອບປະຈຳສູນກາງ;
- ອົງການກວດສອບປະຈຳພາກ.

ອົງການກວດສອບປະຈຳສູນກາງ ແມ່ນ ອົງການກວດສອບແຫ່ງລັດ.

ອົງການກວດສອບປະຈຳພາກ ແມ່ນ ອົງການກວດສອບຂັ້ນທ້ອງຖິ່ນ ທີ່ຂຶ້ນກັບອົງການກວດສອບແຫ່ງລັດ ປະກອບມີ 3 ພາກ ຄື ພາກເໜືອ, ພາກກາງ, ພາກໃຕ້.

ໃນກໍລະນີ ມີຄວາມຈຳເປັນສາມາດ ແຍກອົງການກວດສອບປະຈຳພາກ ເປັນອົງການກວດສອບ ຢູ່ທ້ອງຖິ່ນໃດໜຶ່ງຂຶ້ນກັບອົງການກວດສອບແຫ່ງລັດ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 31 (ປັບປຸງ) ການຈັດຕັ້ງຂອງອົງການກວດສອບແຫ່ງລັດ**

**1. ອົງການກວດສອບແຫ່ງລັດປະກອບດ້ວຍ:**

- ຫ້ອງການ;
- ກົມຈຳນວນໜຶ່ງ;
- ສະຖາບັນຝຶກອົບຮົມ.

ໃນກໍລະນີຈະສ້າງຕັ້ງກົມໃດໜຶ່ງຂຶ້ນ ຕ້ອງໄດ້ຮັບການຕົກລົງຂອງ ຄະນະປະຈຳສະພາແຫ່ງຊາດບົນພື້ນຖານການສະເໜີຂອງປະທານອົງການກວດສອບແຫ່ງລັດ.

**2. ອົງການກວດສອບປະຈຳພາກ ປະກອບດ້ວຍ:**

- ຫ້ອງການ;
- ພະແນກການ.

ໃນກໍລະນີຈະສ້າງຕັ້ງພະແນກໃດໜຶ່ງຂຶ້ນ ຕ້ອງໄດ້ຮັບການຕົກລົງ ຈາກປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງອົງການກວດສອບປະຈຳພາກ.

**ມາດຕາ 32 (ປັບປຸງ) ສິດ ແລະ ໜ້າທີ່ຂອງອົງການກວດສອບແຫ່ງລັດ**

ອົງການກວດສອບແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການກວດສອບເປັນເອກະລາດ ຕາມກົດໝາຍ ເພື່ອຢັ້ງຢືນຄວາມຖືກຕ້ອງຂອງເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ ແລະ ຜົນການຈັດຕັ້ງປະຕິບັດ;

2. ຄົ້ນຄວ້າ ແລະ ສ້າງຮ່າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ທິດທາງແຜນການ, ມາດຕະຖານ ແລະ ມາດຕະການກ່ຽວກັບວຽກງານກວດສອບ ແລ້ວສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

3. ກໍ່ສ້າງ ແລະ ຍົກລະດັບບຸກຄະລາກອນ ເພື່ອຮັບໃຊ້ວຽກງານກວດສອບ;

4. ໂຄສະນາເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ທິດທາງແຜນການ, ມາດຕະຖານ ແລະ ມາດຕະການກ່ຽວກັບວຽກງານກວດສອບ;

5. ຄຸ້ມຄອງ, ຊີ້ນຳ, ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ມາດຕະຖານກ່ຽວກັບວຽກງານກວດສອບ;

6. ສ້າງ ແລະ ຈັດຕັ້ງປະຕິບັດແຜນການກວດສອບປະຈຳປີ;

7. ພິຈາລະນາ, ແກ້ໄຂຄຳສະເໜີກ່ຽວກັບການກວດສອບ ເປັນຕົ້ນ ບົດສະຫຼຸບຜົນການກວດສອບ;

8. ສ້າງກົນໄກປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານກວດສອບ;

9. ເຊື່ອມຕໍ່ ລະບົບຂໍ້ມູນທາງດ້ານສະຖິຕິບັນຊີ-ການເງິນ ຂອງເປົ້າໝາຍຖືກກວດສອບ ໂດຍຜ່ານລະບົບເອເລັກໂຕຣນິກ;

10. ກວດກາບົດສະຫຼຸບຜົນການກວດສອບຂອງວິສາຫະກິດກວດສອບ ທີ່ໄດ້ກວດສອບຫົວໜ່ວຍການບັນຊີ ຊຶ່ງເຫັນວ່າມີຄວາມຈຳເປັນ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ ຫຼື ນາຍົກລັດຖະມົນຕີ;

11. ສະເໜີໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຊີ້ນຳບັນດາເປົ້າໝາຍຖືກກວດສອບ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຄວາມຮ່ວມມື ແລະ ປະຕິບັດຕາມຄຳແນະນຳຂອງອົງການກວດສອບແຫ່ງລັດ;

12. ສະເໜີໃຫ້ກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ລົງວິໄນຕໍ່ບຸກຄົນ ຫຼື ນິຕິບຸກຄົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ທີ່ໄດ້ລະເມີດວິໄນ ທາງດ້ານການເງິນ ແລະ ການບັນຊີ;

13. ສະເໜີຜູ້ສັ່ງການເອກ, ຜູ້ສັ່ງການ ຫຼື ຫົວໜ້າອົງການຄຸ້ມຄອງການເງິນທີ່ກ່ຽວຂ້ອງ ນຳໃຊ້ມາດຕະການຕໍ່ຫົວໜ່ວຍ ທີ່ລະເມີດກົດໝາຍ ໃນການຄຸ້ມຄອງ ການນຳໃຊ້ງົບປະມານ, ການເງິນ ແລະ ຊັບສິນ ຂອງລັດ ຈາກຜົນການກວດສອບ;

14. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງ ນິຕິກຳຕ່າງໆ ທີ່ເຫັນວ່າບໍ່ຖືກຕ້ອງ;

15. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນຂົງເຂດວຽກງານກວດສອບ;

16. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານຂອງອົງການກວດສອບແຫ່ງລັດ ປະຈຳປີ ຕໍ່ກອງປະຊຸມສະພາແຫ່ງຊາດ;

17. ສະຫຼຸບ, ລາຍງານຜົນການກວດສອບບົດສະຫຼຸບຂາດຕົວງົບປະມານແຫ່ງລັດ ປະຈຳປີ ໃຫ້ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ນາຍົກລັດຖະມົນຕີ ແລະ ລາຍງານ ຕໍ່ກອງປະຊຸມສະພາແຫ່ງຊາດ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 33 (ປັບປຸງ) ໂຄງປະກອບບຸກຄະລາກອນຂອງອົງການກວດສອບແຫ່ງລັດ**

ໂຄງປະກອບບຸກຄະລາກອນຂອງອົງການກວດສອບແຫ່ງລັດ ມີ ດັ່ງນີ້:

1. ປະທານອົງການກວດສອບແຫ່ງລັດ;
2. ຮອງປະທານ ອົງການກວດສອບແຫ່ງລັດ ຈຳນວນໜຶ່ງ;
3. ຫົວໜ້າ, ຮອງຫົວໜ້າ ຫ້ອງການ, ກົມ, ສະຖາບັນຝຶກອົບຮົມ;
4. ຫົວໜ້າ, ຮອງຫົວໜ້າ ພະແນກ;
5. ນັກກວດສອບ ແລະ ພະນັກງານວິຊາການຈຳນວນໜຶ່ງ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດສອບແຫ່ງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 34 (ປັບປຸງ) ປະທານອົງການກວດສອບແຫ່ງລັດ**

ປະທານອົງການກວດສອບແຫ່ງລັດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ, ມີອາຍຸການຫ້າປີ. ການເລືອກຕັ້ງດັ່ງກ່າວ ຕ້ອງດຳເນີນຢ່າງໄວໜຶ່ງປີ ຫຼັງຈາກກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ.

ສຳລັບ ເງິນເດືອນ ແລະ ນະໂຍບາຍອື່ນ ຂອງປະທານອົງການກວດສອບແຫ່ງລັດ ໃຫ້ປະຕິບັດຕາມລະບຽບການທີ່ລັດວາງອອກ.

**ມາດຕາ 35 (ປັບປຸງ) ສິດ ແລະ ໜ້າທີ່ຂອງປະທານອົງການກວດສອບແຫ່ງລັດ**

ປະທານອົງການກວດສອບແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບໂດຍກົງຕໍ່ສະພາແຫ່ງຊາດ ແລະ ລາຍງານຕໍ່ ປະທານປະເທດ, ນາຍົກລັດຖະມົນຕີ ແລະ ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບວຽກງານກວດສອບແຫ່ງລັດ;
2. ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກວດສອບແຫ່ງລັດທົ່ວປະເທດ;
3. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານກວດສອບແຫ່ງລັດ;
4. ສະເໜີສ້າງ ຫຼື ປັບປຸງນິຕິກຳ ກ່ຽວກັບວຽກງານກວດສອບ ຕໍ່ຄະນະປະຈຳສະພາແຫ່ງຊາດ;
5. ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບເນື້ອໃນບົດສະຫຼຸບຜົນການກວດສອບ ຂອງອົງການກວດສອບແຫ່ງລັດ;
6. ເຂົ້າຮ່ວມກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມລັດຖະບານ ກ່ຽວກັບບັນຫາທີ່ພົວພັນເຖິງວຽກງານກວດສອບ;
7. ລາຍງານ ແລະ ຕອບຂໍ້ຊັກຖາມກ່ຽວກັບຜົນການກວດສອບບົດສະຫຼຸບຂາດຕົວງົບປະມານແຫ່ງລັດປະຈຳປີ ຕໍ່ກອງປະຊຸມສະພາແຫ່ງຊາດ;

8. ສະເໜີກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ແລະ ການຈັດຕັ້ງ ທີ່ຄຸ້ມຄອງເປົ້າໝາຍ ຖືກກວດສອບສຶກສາອົບຮົມ, ລົງວິໄນ ຫຼື ດຳເນີນຄະດີ ຕາມແຕ່ລະກໍລະນີ ຕໍ່ເປົ້າໝາຍຖືກກວດສອບ;

9. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານຂອງອົງການກວດສອບແຫ່ງລັດ ແຕ່ຂັ້ນຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ຫົວໜ້າສະຖາບັນຝຶກອົບຮົມ ລວມທັງຮອງປະທານອົງການກວດສອບປະຈຳພາກລົງໄປ;

10. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານ ຂອງອົງການກວດສອບແຫ່ງລັດ ປະຈຳທີກເດືອນ ແລະ ປະຈຳປີ ຕໍ່ປະທານປະເທດ, ນາຍົກລັດຖະມົນຕີ ແລະ ຄະນະປະຈຳ ສະພາແຫ່ງຊາດ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 36 (ປັບປຸງ) ຮອງປະທານອົງການກວດສອບແຫ່ງລັດ**

ຮອງປະທານອົງການກວດສອບແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງປະທານອົງການກວດສອບແຫ່ງລັດ.

ສຳລັບ ເງິນເດືອນ ແລະ ນະໂຍບາຍອື່ນ ຂອງຮອງປະທານອົງການກວດສອບແຫ່ງລັດ ໃຫ້ປະຕິບັດຕາມລະບຽບການທີ່ລັດວາງອອກ.

ຮອງປະທານອົງການກວດສອບແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍວຽກປະທານອົງການກວດສອບແຫ່ງລັດ ແລະ ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງປະທານອົງການກວດສອບແຫ່ງລັດ;

2. ໃນກໍລະນີທີ່ປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ຮອງປະທານຜູ້ໄດ້ຮັບມອບໝາຍ ຈາກປະທານອົງການກວດສອບແຫ່ງລັດ ເປັນຜູ້ຮັກສາການແທນ.

**ມາດຕາ 37 (ປັບປຸງ) ອົງການກວດສອບປະຈຳພາກ**

ອົງການກວດສອບປະຈຳພາກ ແມ່ນ ອົງການກວດສອບຂັ້ນທ້ອງຖິ່ນທີ່ຂຶ້ນກັບ ອົງການກວດສອບແຫ່ງລັດ, ດຳເນີນການກວດສອບບັນດາການຈັດຕັ້ງທີ່ຕັ້ງຢູ່ໃນພື້ນທີ່ ຂອງພາກ ແລະ ກວດສອບເປົ້າໝາຍອື່ນໆ ຕາມການມອບໝາຍ ຂອງປະທານອົງການກວດສອບແຫ່ງລັດ.

ອົງການກວດສອບປະຈຳພາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຫັນເອົານະໂຍບາຍ, ມະຕິ, ແຜນການຂອງອົງການກວດສອບແຫ່ງລັດ ມາເປັນແຜນການ, ແຜນງານ, ໂຄງການລະອຽດຂອງຕົນແລ້ວຈັດຕັ້ງປະຕິບັດ;

2. ໂຄສະນາເຜີຍແຜ່ກົດໝາຍ ກ່ຽວກັບການກວດສອບ ລວມທັງຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ຂອງປະທານອົງການກວດສອບແຫ່ງລັດ;

3. ດຳເນີນການກວດສອບ ຕາມແຜນການຂອງຕົນ ແລະ ຕາມການມອບໝາຍຂອງປະທານອົງການກວດສອບແຫ່ງລັດ;

4. ແຈ້ງຜົນການກວດສອບ ໃຫ້ເປົ້າໝາຍຖືກກວດສອບ ພາຍຫຼັງອົງການກວດສອບແຫ່ງລັດໄດ້ຮັບຮອງເອົາ;

5. ພິຈາລະນາ, ແກ້ໄຂຄຳສະເໜີ ທີ່ພົວພັນເຖິງການກວດສອບ ເປັນຕົ້ນ ກ່ຽວກັບບົດສະຫຼຸບຜົນການກວດສອບ;

6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການປະຕິບັດວຽກງານກວດສອບ;

7. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດສອບ ຕາມການມອບໝາຍຂອງປະທານອົງການກວດສອບແຫ່ງລັດ;

8. ເຂົ້າຮ່ວມ ແລະ ລາຍງານ ຜົນການກວດສອບງົບປະມານຂາດຕົວປະຈຳປີຂອງ ແຂວງ, ນະຄອນຫຼວງ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ;

9. ສະຫຼຸບ, ລາຍງານຜົນການເຄື່ອນໄຫວວຽກງານ ປະຈຳງວດ, ປະຈຳປີ ຕໍ່ປະທານອົງການກວດສອບແຫ່ງລັດ ແລະ ສະຫຼຸບ, ລາຍງານຜົນການເຄື່ອນໄຫວວຽກງານປະຈຳປີ ຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ທີ່ກ່ຽວຂ້ອງ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ຫຼື ຕາມການມອບໝາຍຂອງ ປະທານອົງການກວດສອບແຫ່ງລັດ.

**ມາດຕາ 38 (ປັບປຸງ) ໂຄງປະກອບ ບຸກຄະລາກອນຂອງອົງການກວດສອບປະຈຳພາກ**

ໂຄງປະກອບບຸກຄະລາກອນຂອງອົງການກວດສອບປະຈຳພາກ ມີ ດັ່ງນີ້:

1. ປະທານອົງການກວດສອບປະຈຳພາກ;
2. ຮອງປະທານອົງການກວດສອບປະຈຳພາກ;
3. ຫົວໜ້າ, ຮອງຫົວໜ້າ ຫ້ອງການ, ພະແນກ;
4. ນັກກວດສອບ ແລະ ພະນັກງານວິຊາການ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດສອບປະຈຳພາກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 39 (ປັບປຸງ) ປະທານອົງການກວດສອບປະຈຳພາກ**

ປະທານອົງການກວດສອບປະຈຳພາກ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງ ປະທານອົງການກວດສອບແຫ່ງລັດ.

ສຳລັບເງິນເດືອນ ແລະ ນະໂຍບາຍອື່ນ ຂອງປະທານອົງການກວດສອບປະຈຳພາກ ໃຫ້ປະຕິບັດຕາມລະບຽບການທີ່ລັດວາງອອກ.

ປະທານອົງການກວດສອບປະຈຳພາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບໂດຍກົງ ຕໍ່ປະທານອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ;

2. ຊີ້ນຳ ແລະ ກວດກາການດຳເນີນການກວດສອບ ໃຫ້ສອດຄ່ອງກັບມາດຕະຖານການກວດສອບ;

3. ສະເໜີປັບປຸງກົງຈັກການຈັດຕັ້ງ, ຈຳນວນພົນ ແລະ ການສັບຊ້ອນພະນັກງານຢູ່ໃນອົງການກວດສອບປະຈຳພາກຂອງຕົນ ຕໍ່ປະທານອົງການກວດສອບແຫ່ງລັດ;

4. ປະສານສົມທົບ ກັບອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ຢູ່ໃນພື້ນທີ່ພາກຂອງຕົນໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;

5. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນຂົງເຂດວຽກງານກວດສອບ ຕາມການມອບໝາຍ ຂອງປະທານອົງການກວດສອບແຫ່ງລັດ;

6. ລາຍງານຜົນຂອງການເຄື່ອນໄຫວວຽກງານທັງໝົດ ຂອງອົງການກວດສອບປະຈຳພາກ ຕໍ່ປະທານອົງການກວດສອບແຫ່ງລັດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງປະທານອົງການກວດສອບແຫ່ງລັດ.

### ມາດຕາ 40 (ປັບປຸງ) ຮອງປະທານອົງການກວດສອບປະຈຳພາກ

ຮອງປະທານອົງການກວດສອບປະຈຳພາກ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງ ປະທານອົງການກວດສອບປະຈຳພາກ.

ສຳລັບ ເງິນເດືອນ ແລະ ນະໂຍບາຍອື່ນ ຂອງຮອງປະທານອົງການກວດສອບປະຈຳພາກ ໃຫ້ປະຕິບັດຕາມລະບຽບການທີ່ລັດວາງອອກ.

ຮອງປະທານອົງການກວດສອບປະຈຳພາກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍວຽກປະທານອົງການກວດສອບປະຈຳພາກ ແລະ ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງປະທານອົງການກວດສອບປະຈຳພາກ;

2. ໃນກໍລະນີ ທີ່ປະທານອົງການກວດສອບປະຈຳພາກບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ຮອງປະທານອົງການກວດສອບປະຈຳພາກ ຜູ້ໄດ້ຮັບມອບໝາຍຈາກ ປະທານອົງການກວດສອບປະຈຳພາກ ເປັນຜູ້ຮັກສາການແທນ.

## ໝວດທີ 2
## ມາດຕະຖານການນຳຂອງອົງການກວດສອບແຫ່ງລັດ

### ມາດຕາ 41 (ປັບປຸງ) ມາດຕະຖານລວມຂອງການນຳຂອງອົງການກວດສອບແຫ່ງລັດ

ມາດຕະຖານລວມຂອງປະທານ, ຮອງປະທານຂອງອົງການກວດສອບແຫ່ງລັດ ແລະ ປະທານອົງການກວດສອບປະຈຳພາກ ມີ ດັ່ງນີ້:

1. ມາດຕະຖານທາງດ້ານຄຸນທາດການເມືອງ:

- ມີທັດສະນະຫຼັກໝັ້ນ ການເມືອງໜັກແໜ້ນ, ປອດໃສ ຂາວສະອາດ, ບໍ່ຫວັ່ນໄຫວ ຄອນແຄນຕໍ່ສະພາບການທີ່ຜັນແປ ຢູ່ພາຍໃນ ແລະ ສາກົນ;

- ເປັນເອກະພາບສູງ ກັບແນວທາງປ່ຽນແປງໃໝ່ຂອງພັກ, ບໍ່ມີແນວຄິດຫຼາຍພັກຫຼາຍເຄົ້າ, ມີຫຼັກໝັ້ນຈຳແນກມິດ-ສັດຕູຢ່າງຈະແຈ້ງ ແລະ ເດັດຂາດ;

- ເປັນຜູ້ມີຈິດໃຈ ຕື່ນຕົວເປັນເຈົ້າການຮັບໃຊ້ຊາດ ຮັບໃຊ້ປະຊາຊົນ, ມີຄວາມຍຸຕິທຳ, ບໍ່ສວຍໃຊ້ຖານະຕຳແໜ່ງ, ບໍ່ໂລບມາກໂລພາ, ບໍ່ສໍ້ລາດບັງຫຼວງ;

- ເດັດດ່ຽວຕໍ່ສູ້ກັບບັນດາທັດສະນະທີ່ຜິດເຂວ, ບໍ່ອວດອີ່ງທະນົງຕົວ;

- ມີວິໄສທັດກວ້າງໄກ, ມີພິກໄຫວໃນການປະຕິບັດໜ້າທີ່ວຽກງານ, ມີຄວາມທຸ່ນທ່ຽງປະຕິບັດຕາມສຽງສ່ວນຫຼາຍ;

- ປະຕິບັດແນວທາງການຕ່າງປະເທດຂອງພັກ ຢ່າງຖືກຕ້ອງ.

2. ມາດຕະຖານຄວາມຮູ້ ແລະ ຄວາມສາມາດ:

- ມີຄວາມຮູ້ທາງດ້ານທິດສະດີການເມືອງ ແລະ ການປົກຄອງ, ມີຄວາມຮູ້ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ມີຄວາມສາມາດໃນການຊີ້ນຳ ນຳພາ ປະຕິບັດໜ້າທີ່ການເມືອງຂອງຂະແໜງການທີ່ຕົນຮັບຜິດຊອບ;

- ຮູ້ເຮັດວຽກງານສຶກສາອົບຮົມ ການເມືອງແນວຄິດ ແລະ ມີບົດຮຽນໃນວຽກງານກໍ່ສ້າງພັກ-ພະນັກງານ, ຮູ້ຄຸ້ມຄອງ ແລະ ນຳໃຊ້ພະນັກງານ;

- ກຳແໜ້ນແນວທາງ, ແຜນນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ເດັດດ່ຽວເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ;

- ມີຄວາມຮູ້ດ້ານພາສາຕ່າງປະເທດໃດໜຶ່ງ ໃນລະດັບພື້ນຖານຂຶ້ນໄປ;

- ມີຄວາມສາມາດເຕົ້າໂຮມ ຄວາມສາມັກຄີພາຍໃນໝູ່ຄະນະ ແລະ ພະນັກງານ, ສະມາຊິກພັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ຮູ້ເສີມຂະຫຍາຍສະຕິປັນຍາຫົວຄິດປະດິດສ້າງຂອງມະຫາຊົນ;

- ມີຄວາມຮູ້ລະດັບຊັ້ນສູງຂຶ້ນໄປ, ມີປະສົບການດ້ານການເງິນ, ການບັນຊີ, ການກວດສອບ, ຄຸ້ມຄອງບໍລິຫານ ແລະ ກົດໝາຍ.

3. ມາດຕະຖານ ແບບແຜນເຮັດວຽກ:

- ມີແບບແຜນເຂັ້ມງວດໃນການເຮັດວຽກ ແລະ ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ມີການແບ່ງງານ, ມອບສິດ ໜ້າທີ່ໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ;

- ເຮັດວຽກມີແຜນການ, ມີຈຸດສຸມ, ມີຄາດໝາຍ, ມີການກວດກາ, ສະຫຼຸບຕີລາຄາປະເມີນຜົນ ແລະ ຖອດຖອນບົດຮຽນ;

- ມີທັດສະນະມະຫາຊົນຢ່າງຖືກຕ້ອງ, ຮູ້ຟັງຄຳຄິດຄຳເຫັນ, ໃກ້ຊິດຕິດແທດ ແລະ ຮູ້ຮ່ຳຮຽນນຳມະຫາຊົນ.

ນອກຈາກມາດຕະຖານ ດັ່ງກ່າວເທິງນີ້ ແລ້ວຍັງຕ້ອງມີສັນຊາດລາວ ໂດຍກໍາເນີດ ແລະ ມີສຸຂະພາບດີ.

**ມາດຕາ 42 (ປັບປຸງ) ມາດຕະຖານສະເພາະຂອງປະທານອົງການກວດສອບແຫ່ງລັດ**

ນອກຈາກມາດຕະຖານລວມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້ແລ້ວ ປະທານອົງການກວດສອບແຫ່ງລັດ ຍັງຕ້ອງເຄີຍດໍາລົງຕໍາແໜ່ງຂັ້ນຮອງລັດຖະມົນຕີ ຫຼື ຮອງປະທານອົງການທຽບເທົ່າຂຶ້ນໄປ.

**ມາດຕາ 43 ມາດຕະຖານສະເພາະຂອງຮອງປະທານອົງການກວດສອບແຫ່ງລັດ**

ນອກຈາກມາດຕະຖານລວມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້ແລ້ວ ຮອງປະທານອົງການກວດສອບແຫ່ງລັດ ຍັງຕ້ອງເຄີຍດໍາລົງຕໍາແໜ່ງຂັ້ນປະທານອົງການກວດສອບປະຈໍາພາກ ຫຼື ຫົວໜ້າກົມຂຶ້ນໄປ.

**ມາດຕາ 44 (ປັບປຸງ) ມາດຕະຖານສະເພາະຂອງປະທານອົງການກວດສອບປະຈໍາພາກ**

ນອກຈາກມາດຕະຖານລວມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້ແລ້ວ ປະທານອົງການກວດສອບປະຈໍາພາກ ຍັງຕ້ອງເຄີຍດໍາລົງຕໍາແໜ່ງຂັ້ນຫົວໜ້າກົມຂຶ້ນໄປ.

## ໝວດທີ 3
## ການເລືອກຕັ້ງ, ການແຕ່ງຕັ້ງ,
## ການຍົກຍ້າຍ, ການປົດຕໍາແໜ່ງ ການນໍາຂອງອົງການກວດສອບແຫ່ງລັດ

**ມາດຕາ 45 ການສະເໜີລາຍຊື່ຜູ້ສະໝັກຮັບເລືອກຕັ້ງ**

ປະທານປະເທດ ເປັນຜູ້ຄົ້ນຄວ້າ ແລະ ສະເໜີລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ທີ່ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41 ແລະ 42 ຂອງກົດໝາຍສະບັບນີ້ ຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາລົງຄະແນນສຽງເລືອກຕັ້ງ. ການລົງຄະແນນສຽງນັ້ນ ຕ້ອງດໍາເນີນຢ່າງປິດລັບ.

ການເລືອກຕັ້ງປະທານອົງການກວດສອບແຫ່ງລັດ ຈະມີຜົນສັກສິດກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 46 ການສະເໜີແຕ່ງຕັ້ງຮອງປະທານອົງການກວດສອບແຫ່ງລັດ**

ປະທານອົງການກວດສອບແຫ່ງລັດ ເປັນຜູ້ສະເໜີລາຍຊື່ແຕ່ງຕັ້ງເປັນຮອງປະທານອົງການກວດສອບແຫ່ງລັດ ຕໍ່ ປະທານປະເທດ.

**ມາດຕາ 47 (ປັບປຸງ) ການສະເໜີແຕ່ງຕັ້ງປະທານອົງການກວດສອບປະຈຳພາກ**

ປະທານອົງການກວດສອບແຫ່ງລັດ ເປັນຜູ້ສະເໜີລາຍຊື່ແຕ່ງຕັ້ງເປັນ ປະທານອົງການກວດສອບປະຈຳພາກ ຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອຄົ້ນຄວ້າ ແລະ ພິຈາລະນາແຕ່ງຕັ້ງ.

**ມາດຕາ 48 (ປັບປຸງ) ການຍົກຍ້າຍ ຫຼື ປົດຕຳແໜ່ງ ການນຳຂອງອົງການກວດສອບແຫ່ງລັດ**

ການຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ຂອງອົງການກວດສອບແຫ່ງລັດ ແລະ ປະທານອົງການກວດສອບປະຈຳພາກ ໃຫ້ປະຕິບັດຕາມຂັ້ນຕອນ ແລະ ວິທີການ ການເລືອກຕັ້ງ ຫຼື ການແຕ່ງຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 45, 46 ແລະ 47 ຂອງກົດໝາຍສະບັບນີ້.

## ໝວດທີ 4
## ນັກກວດສອບ ແລະ ຄະນະກວດສອບແຫ່ງລັດ

**ມາດຕາ 49 ນັກກວດສອບແຫ່ງລັດ**

ນັກກວດສອບແຫ່ງລັດ ແມ່ນ ພະນັກງານທີ່ສັງກັດຢູ່ອົງການກວດສອບແຫ່ງລັດ.

ນັກກວດສອບແຫ່ງລັດ ຕ້ອງມີມາດຕະຖານ ດັ່ງນີ້:

1. ກຳແໜ້ນແນວທາງນະໂຍບາຍ, ກົດໝາຍ;
2. ມີທັດສະນະຫຼັກໝັ້ນ, ມີຄຸນສົມບັດສິນທຳປະຕິວັດ;
3. ມີຄວາມຮັບຜິດຊອບສູງ, ມີຄວາມປອດໃສ ແລະ ມີຄວາມຍຸຕິທຳ;
4. ມີຄວາມຮູ້, ຄວາມສາມາດ, ມີວິຊາສະເພາະໃດໜຶ່ງທີ່ກ່ຽວຂ້ອງກັບວຽກງານກວດສອບ ໂດຍມີ ປະກາສະນີຍະບັດແຕ່ຊັ້ນສູງຂຶ້ນໄປ ຫຼື ໄດ້ຜ່ານການຮຽນ, ການຝຶກອົບຮົມວຽກງານກວດສອບ ແລະ ມີບົດຮຽນກ່ຽວກັບວຽກງານກວດສອບແຕ່ສາມປີຂຶ້ນໄປ;
5. ຮັກສາຄວາມລັບດ້ານວິຊາຊີບກວດສອບ;
6. ບໍ່ເຄີຍຖືກລົງວິໄນທາງການເງິນ ແລະ ການບັນຊີ ຫຼື ຖືກໂທດທາງອາຍາ ໂດຍເຈດຕະນາມາກ່ອນ;
7. ມີສັນຊາດລາວໂດຍກຳເນີດ;
8. ມີສຸຂະພາບດີ.

ສຳລັບມາດຕະຖານຂອງນັກກວດສອບໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 50 ຄະນະກວດສອບແຫ່ງລັດ**

ຄະນະກວດສອບແຫ່ງລັດ ຖືກແຕ່ງຕັ້ງໂດຍ ປະທານອົງການກວດສອບແຫ່ງລັດ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ສະມາຊິກແຕ່ສາມຄົນຂຶ້ນໄປ.

ຄະນະກວດສອບແຫ່ງລັດ ມີໜ້າທີ່ດຳເນີນການກວດສອບຕາມຂັ້ນຕອນ ແລະ ມາດຕະຖານການກວດສອບແຫ່ງລັດ.

**ມາດຕາ 51 ຜູ້ຮ່ວມງານກວດສອບ**

ຜູ້ຮ່ວມງານກວດສອບ ແມ່ນ ວິສາຫະກິດກວດສອບ ທີ່ໄດ້ເຊັນສັນຍາກວດສອບ ກັບ ອົງການກວດສອບແຫ່ງລັດ ເພື່ອດຳເນີນການກວດສອບເປົ້າໝາຍຖືກກວດສອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້.

**ຜູ້ຮ່ວມງານກວດສອບ ມີ ພັນທະ ດັ່ງນີ້:**

1. ເຊັນສັນຍາກັບອົງການກວດສອບແຫ່ງລັດ;
2. ປະຕິບັດຕາມຂໍ້ຜູກພັນໃນສັນຍາກວດສອບ;
3. ປະຕິບັດຕາມກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
4. ດຳເນີນການກວດສອບຕາມມາດຕະຖານການກວດສອບແຫ່ງລັດ;
5. ຮັບຜິດຊອບຕໍ່ອົງການກວດສອບແຫ່ງລັດ ກ່ຽວກັບຜົນການກວດສອບທີ່ຕົນໄດ້ປະຕິບັດ;
6. ສົ່ງບົດລາຍງານຜົນການກວດສອບໃຫ້ອົງການກວດສອບແຫ່ງລັດ ເພື່ອກວດກາຄືນ.

ສຳລັບລະບຽບການລະອຽດກ່ຽວກັບ ຜູ້ຮ່ວມງານກວດສອບນັ້ນ ແມ່ນ ປະທານອົງການກວດສອບແຫ່ງລັດ ເປັນຜູ້ກຳນົດ.

## ພາກທີ IV
## ສະພາທີ່ປຶກສາການກວດສອບແຫ່ງລັດ

**ມາດຕາ 52 ສະພາທີ່ປຶກສາການກວດສອບແຫ່ງລັດ**

ສະພາທີ່ປຶກສາການກວດສອບແຫ່ງລັດ ແມ່ນ ການຈັດຕັ້ງໜຶ່ງ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງອົງການກວດສອບແຫ່ງລັດ, ຖືກແຕ່ງຕັ້ງ ຫຼື ຍຸບເລີກ ໂດຍປະທານອົງການກວດສອບແຫ່ງລັດ, ມີພາລະບົດບາດ ຄົ້ນຄວ້າລະບຽບການຕ່າງໆ ກ່ຽວກັບການກວດສອບ ແລະ ໃຫ້ຄຳປຶກສາທາງດ້ານວິຊາການກວດສອບແກ່ອົງການກວດສອບແຫ່ງລັດ.

**ມາດຕາ 53 ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ**

ໂຄງປະກອບບຸກຄະລາກອນຂອງສະພາທີ່ປຶກສາການກວດສອບແຫ່ງລັດ ມີ ດັ່ງນີ້:

- ຮອງປະທານອົງການກວດສອບແຫ່ງລັດ ເປັນປະທານ;
- ຫົວໜ້າກົມໃດໜຶ່ງທີ່ກ່ຽວຂ້ອງຂອງອົງການກວດສອບແຫ່ງລັດ ເປັນຮອງປະທານ;
- ກຳມະການຈຳນວນໜຶ່ງ.

ສຳລັບໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາທີ່ປຶກສາການກວດສອບແຫ່ງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສະພາທີ່ປຶກສາການກວດສອບແຫ່ງລັດ**

ສະພາທີ່ປຶກສາການກວດສອບແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າມາດຕະຖານ ແລະ ລະບຽບການຕ່າງໆທາງດ້ານການກວດສອບ;

2. ໃຫ້ຄຳປຶກສາ ກ່ຽວກັບການເຄື່ອນໄຫວວຽກງານດ້ານວິຊາການກວດສອບ ແກ່ອົງການກວດສອບແຫ່ງລັດ;

3. ປະກອບຄຳເຫັນໃສ່ ຮ່າງນິຕິກຳກ່ຽວກັບການກວດສອບແຫ່ງລັດ;

4. ເຂົ້າຮ່ວມການເຄື່ອນໄຫວວຽກງານກວດສອບຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ສິດ ແລະ ພັນທະຂອງເປົ້າໝາຍຖືກກວດສອບ

**ມາດຕາ 55 ສິດຂອງເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບ ມີ ສິດ ດັ່ງນີ້:

1. ສະເໜີໃຫ້ອົງການກວດສອບແຫ່ງລັດ ແຈ້ງການຕົກລົງກ່ຽວກັບການແຕ່ງຕັ້ງຄະນະກວດສອບແຫ່ງລັດ;

2. ປະຕິເສດການສະໜອງເອກະສານ ຫຼື ຂໍ້ມູນອື່ນ ທີ່ບໍ່ກ່ຽວຂ້ອງກັບເນື້ອໃນ ຂອງການຕົກລົງກວດສອບ;

3. ສະເໜີປ່ຽນບຸກຄົນໃນຄະນະກວດສອບແຫ່ງລັດ ຖ້າເຫັນວ່າມີການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 57 ແລະ 58 ຂອງກົດໝາຍສະບັບນີ້;

4. ປຶກສາຫາລື, ອະທິບາຍຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາທີ່ໄດ້ຍົກຂຶ້ນໃນຮ່າງບົດບັນທຶກຜົນການກວດສອບ;

5. ຍື່ນຄຳຮ້ອງຕໍ່ອົງການກວດສອບແຫ່ງລັດ ກ່ຽວກັບການກະທຳທີ່ເປັນການລະເມີດກົດໝາຍຂອງນັກກວດສອບແຫ່ງລັດ ຫຼື ຜູ້ມີສ່ວນຮ່ວມໃນການກວດສອບທີ່ເກີດຂຶ້ນ ໃນເວລາດຳເນີນການກວດສອບ;

6. ສະເໜີກ່ຽວກັບບົດສະຫຼຸບຜົນການກວດສອບ ທີ່ຕົນເຫັນວ່າຂັດກັບກົດໝາຍ ຕໍ່ອົງການກວດສອບແຫ່ງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາປັບປຸງແກ້ໄຂ;

7. ທວງເອົາຄ່າເສຍຫາຍ ຍ້ອນການກະທຳທີ່ບໍ່ຖືກຕ້ອງ ຕາມຈັນຍາບັນຂອງນັກກວດສອບແຫ່ງລັດ.

**ມາດຕາ 56 (ປັບປຸງ) ພັນທະຂອງເປົ້າໝາຍຖືກກວດສອບ**

ເປົ້າໝາຍຖືກກວດສອບ ມີ ພັນທະ ດັ່ງນີ້:

1. ປະຕິບັດຕາມເນື້ອໃນຂອງການຕົກລົງກວດສອບ ຢ່າງເຂັ້ມງວດ;

2. ແຕ່ງຕັ້ງຄະນະຮ່ວມເຮັດວຽກ ແລະ ຕອບຄືນຢ່າງເປັນລາຍລັກອັກສອນ ກ່ຽວກັບຂໍ້ຕົກລົງກວດສອບໃຫ້ແກ່ອົງການກວດສອບແຫ່ງລັດ;

3. ສົ່ງເອກະສານລາຍງານການເງິນປະຈຳເດືອນຂອງຕົນ ໃຫ້ອົງການກວດສອບແຫ່ງລັດ ກ່ອນວັນທີ 15 ຂອງເດືອນຖັດໄປ; ສຳລັບການສົ່ງເອກະສານລາຍງານການເງິນປະຈຳປີ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ;

4. ສະໜອງຂໍ້ມູນ ຂ່າວສານ ແລະ ໃຫ້ຄວາມກະຈ່າງແຈ້ງກ່ຽວກັບວຽກງານກວດສອບ ຕາມການສະເໜີຂອງຄະນະກວດສອບແຫ່ງລັດ ໃຫ້ຄົບຖ້ວນ ແລະ ທັນເວລາ ໃນເວລາດຳເນີນການກວດສອບ;

5. ອຳນວຍຄວາມສະດວກ ໃຫ້ອົງການກວດສອບແຫ່ງລັດ ເຊື່ອມຕໍ່ລະບົບບັນຊີ, ການເງິນດ້ວຍລະບົບເອເລັກໂຕຣນິກ;

6. ປັບປຸງ ແກ້ໄຂຂໍ້ຄົງຄ້າງ ຕາມຄຳແນະນຳ ຂອງອົງການກວດສອບແຫ່ງລັດ ພ້ອມທັງລົບລ້າງເງື່ອນໄຂ ແລະ ສາເຫດຂອງການລະເມີດ;

7. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບການຈັດຕັ້ງປະຕິບັດຄຳແນະນຳ ຂອງອົງການກວດສອບແຫ່ງລັດ;

8. ຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ຕົນໄດ້ລະເມີດກົດໝາຍ ກ່ຽວກັບເນື້ອໃນຂອງການກວດສອບ;

9. ເຊັນຢັ້ງຢືນໃສ່ບົດບັນທຶກຜົນການກວດສອບ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 57 (ປັບປຸງ) ຂໍ້ຫ້າມສຳລັບນັກກວດສອບແຫ່ງລັດ**

ຫ້າມນັກກວດສອບແຫ່ງລັດ ມີ ພຶດຕິກຳ ດັ່ງນີ້:

1. ລາຍງານຂໍ້ມູນກວດສອບ ບໍ່ກົງກັບຄວາມເປັນຈິງ;

2. ສວຍໃຊ້ໜ້າທີ່, ຕຳແໜ່ງ, ອຳນາດ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;

3. ຮັບສິນບົນ;

4. ເປີດເຜີຍຄວາມລັບດ້ານວິຊາຊີບກວດສອບ ຫຼື ຂໍ້ມູນກ່ຽວກັບຜົນການກວດສອບ ໂດຍບໍ່ໄດ້ຮັບອະນຸຍາດ;

5. ຫາຄວາມບໍ່ຈິງ, ນາບຂູ່ ຫຼື ສ້າງຄວາມຫຍຸ້ງຍາກທີ່ບໍ່ຈໍາເປັນແກ່ເປົ້າໝາຍຖືກກວດສອບ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 58 (ປັບປຸງ) ຂໍ້ຫ້າມສໍາລັບການແຕ່ງຕັ້ງນັກກວດສອບແຫ່ງລັດ**

ຫ້າມແຕ່ງຕັ້ງບຸກຄົນດັ່ງລຸ່ມນີ້ ເຂົ້າໃນຄະນະກວດສອບແຫ່ງລັດ:

1. ຜູ້ມີທຶນ, ຮຸ້ນ, ຜົນປະໂຫຍດດ້ານການເງິນ ຫຼື ການພົວພັນດ້ານຜົນປະໂຫຍດອື່ນ ກັບເປົ້າໝາຍຖືກກວດສອບ;

2. ການນໍາ, ຫົວໜ້າບັນຊີ ຫຼື ນາຍບັນຊີທີ່ເຄີຍຢູ່ເປົ້າໝາຍຖືກກວດສອບ ແລະ ໄດ້ຍົກຍ້າຍໄປຢູ່ອົງການກວດສອບແຫ່ງລັດບໍ່ເຖິງຫ້າປີ;

3. ຜູ້ເປັນຍາດພີ່ນ້ອງກັບການນໍາ, ຫົວໜ້າບັນຊີ ຫຼື ນາຍບັນຊີ ຢູ່ເປົ້າໝາຍຖືກກວດສອບ.

**ມາດຕາ 59 (ປັບປຸງ) ຂໍ້ຫ້າມສໍາລັບເປົ້າໝາຍຖືກກວດສອບ**

ຫ້າມເປົ້າໝາຍຖືກກວດສອບ ມີ ພຶດຕິກໍາ ດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ ແລະ ເອກະສານ ທີ່ພົວພັນກັບເນື້ອໃນຂອງການຕົກລົງກວດສອບ;

2. ລາຍງານ, ສະໜອງຂໍ້ມູນ, ເອກະສານ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ, ຊຸກເຊື່ອງ ຫຼື ທໍາລາຍເອກະສານ ຫຼື ວັດຖຸສິ່ງຂອງທີ່ພົວພັນກັບການກວດສອບ;

3. ໃຊ້ຄວາມຮຸນແຮງ, ຂັດຂວາງ, ນາບຂູ່ ຄະນະກວດສອບແຫ່ງລັດ ຫຼື ຜູ້ສະໜອງຂໍ້ມູນໃຫ້ແກ່ການກວດສອບ;

4. ໃຫ້ສິນບົນແກ່ຄະນະກວດສອບແຫ່ງລັດ, ຜູ້ສະໜອງຂໍ້ມູນໃຫ້ແກ່ການກວດສອບ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງກັບການກວດສອບ;

5. ແກ່ຍາວເວລາ ການກວດສອບ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 60 (ປັບປຸງ) ຂໍ້ຫ້າມສໍາລັບການຈັດຕັ້ງ ຫຼື ບຸກຄົນອື່ນ**

ຫ້າມການຈັດຕັ້ງ ຫຼື ບຸກຄົນອື່ນ ມີ ພຶດຕິກໍາ ດັ່ງນີ້:

1. ຍຸແຍ່, ຫາເລື່ອງ, ແຊກແຊງ, ກ້າວກ່າຍ ໃນເວລາດໍາເນີນການກວດສອບ ແລະ ຕ້ານການກວດສອບ;

2. ໃຊ້ຄວາມຮຸນແຮງ, ນາບຂູ່, ທໍາຮ້າຍ ນັກກວດສອບແຫ່ງລັດ, ຜູ້ໃຫ້ຂໍ້ມູນ, ຂັດຂວາງການດໍາເນີນການກວດສອບ ຫຼື ປົກປ້ອງເປົ້າໝາຍຖືກກວດສອບ;

3. ປົກປິດ, ເຊື່ອງອໍາ ຫຼື ທໍາລາຍຂໍ້ມູນຫຼັກຖານທີ່ພົວພັນກັບວຽກງານກວດສອບແຫ່ງລັດ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 61  ຂໍ້ຫ້າມສຳລັບການເລືອກຕັ້ງ ຫຼື ການແຕ່ງຕັ້ງ**

ຫ້າມເລືອກຕັ້ງ ຫຼື ແຕ່ງຕັ້ງ ບຸກຄົນດັ່ງລຸ່ມນີ້ ເປັນການນຳຂອງອົງການກວດສອບ:

1. ຜູ້ກະທຳຜິດ ໃນສະຖານສໍ້ໂກງຊັບ, ຍັກຍອກຊັບ ຫຼື ກະທຳຜິດຕໍ່ເສດຖະກິດ;
2. ຜູ້ກະທຳຜິດໃນສະຖານການກະທຳຜິດອື່ນ ທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບ ເວັ້ນເສຍ ແຕ່ການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ;
3. ຜູ້ຖືກສານຕັດສິນປົດສິດສະໝັກຮັບເລືອກຕັ້ງ;
4. ຜູ້ຖືກສະພາແຫ່ງຊາດ ອະພິປາຍ ແລະ ລົງມະຕິບໍ່ໄວ້ວາງໃຈ.

## ພາກທີ VII
## ການຕິດຕາມກວດກາ
## ການເຄື່ອນໄຫວວຽກງານກວດສອບແຫ່ງລັດ

**ມາດຕາ 62 (ປັບປຸງ) ການຕິດຕາມກວດກາພາຍໃນ**

ການຕິດຕາມກວດກາພາຍໃນ ແມ່ນ ການກວດກາການເຄື່ອນໄຫວກວດສອບແຫ່ງລັດ ໃນລະບົບການຈັດຕັ້ງຂອງການກວດສອບ.

ເພື່ອຮັບປະກັນໃຫ້ວຽກງານກວດສອບແຫ່ງລັດດຳເນີນໄປໂດຍດີ, ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳນັ້ນ ອົງການກວດສອບແຫ່ງລັດ ແລະ ອົງການກວດສອບປະຈຳພາກ ຕ້ອງມີການກວດກາພາຍໃນຢ່າງເປັນປົກກະຕິ.

**ມາດຕາ 63 (ປັບປຸງ) ການຕິດຕາມກວດກາພາຍນອກ**

ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີໜ້າທີ່ຕິດຕາມກວດກາການເຄື່ອນໄຫວວຽກງານ, ການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ, ເງິນ ແລະ ຊັບສິນ ຂອງອົງການກວດສອບແຫ່ງລັດ.

## ພາກທີ VIII
## ງົບປະມານ, ເຄື່ອງແບບ,
## ກາໝາຍ, ບັດນັກກວດສອບ ແລະ ຕາປະທັບ

**ມາດຕາ 64 ງົບປະມານຂອງອົງການກວດສອບແຫ່ງລັດ**

ງົບປະມານຂອງອົງການກວດສອບແຫ່ງລັດ ແມ່ນ ຫົວໜ່ວຍງົບປະມານຂັ້ນໜຶ່ງ ຂອງງົບປະມານແຫ່ງລັດ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານກວດສອບ.

ສຳລັບງົບປະມານ ຂອງອົງການກວດສອບປະຈຳພາກ ແມ່ນ ຫົວໜ່ວຍງົບປະມານຂັ້ນສອງ ທີ່ຂຶ້ນກັບງົບປະມານຂອງອົງການກວດສອບແຫ່ງລັດ.

**ມາດຕາ 65 ເຄື່ອງແບບ, ກາໝາຍ ແລະ ບັດນັກກວດສອບແຫ່ງລັດ**

ອົງການກວດສອບແຫ່ງລັດ ມີ ເຄື່ອງແບບ ແລະ ກາໝາຍ ຊຶ່ງແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ.

ນັກກວດສອບແຫ່ງລັດ ມີບັດສະເພາະ ທີ່ອອກໃຫ້ໂດຍ ອົງການກວດສອບແຫ່ງລັດ.

**ມາດຕາ 66 ຕາປະທັບ**

ຕາປະທັບຂອງອົງການກວດສອບແຫ່ງລັດ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນ ຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ “ອົງການກວດສອບແຫ່ງລັດ”, ຢູ່ເບື້ອງລຸ່ມ ຂຽນວ່າ “ປະທານ” ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ຕາປະທັບຂອງອົງການກວດສອບປະຈຳພາກ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນ ຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ “ອົງການກວດສອບແຫ່ງລັດ”, ຢູ່ເບື້ອງລຸ່ມ ຂຽນວ່າ “ອົງການກວດສອບປະຈຳພາກ” ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 67 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍ ສະບັບນີ້ ເປັນຕົ້ນ ການປະຕິບັດໜ້າທີ່, ການເຄື່ອນໄຫວຖືກຕ້ອງ, ການໃຫ້ຄວາມຮ່ວມມື ແລະ ການສະໜອງຂໍ້ມູນ ກ່ຽວກັບການກວດສອບແຫ່ງລັດ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 68 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ລວມທັງການໃຊ້ແທນຄ່າເສຍຫາຍທາງແພ່ງ.

**ມາດຕາ 69 (ປັບປຸງ) ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ການນຳໃຊ້ງົບປະມານ, ເງິນ ແລະ ຊັບສິນຂອງລັດ ຫຼື ການດຳເນີນວຽກງານຂອງຕົນ ຊຶ່ງກໍ່ຄວາມເສຍຫາຍແກ່ການຈັດຕັ້ງ ຫຼື ບຸກຄົນອື່ນ ທີ່ບໍ່ມີມູນຄ່າສູງ ແຕ່ມີຄວາມຈິງໃຈລາຍງານ ແລະ ຮັບສາລະພາບຕໍ່ຄວາມຜິດພາດຂອງຕົນ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ.

**ມາດຕາ 70 (ປັບປຸງ) ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກ ຄວາມຜິດກໍຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

- ຕິຕຽນ, ກ່າວເຕືອນຄວາມຜິດ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງບຸກຄົນນັ້ນ;
- ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ການຍ້ອງຍໍ;
- ປົດຕຳແໜ່ງ ຫຼື ຍົກຍ້າຍ ໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
- ໃຫ້ອອກຈາກການເປັນພະນັກງານ-ລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 71 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ບໍ່ມີມູນຄ່າສູງ ກໍຈະຖືກປັບໃໝ.

ອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 72 (ປັບປຸງ) ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ການນຳໃຊ້ ງົບປະມານ, ເງິນ ແລະ ຊັບສິນຂອງລັດ ຫຼື ການດຳເນີນວຽກງານຂອງຕົນ ຊຶ່ງກໍ່ຄວາມເສຍຫາຍ ແກ່ການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນອື່ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 73 (ປັບປຸງ) ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ການນຳໃຊ້ງົບປະມານ, ເງິນ ແລະ ຊັບສິນຂອງລັດ ຫຼື ການດຳເນີນວຽກງານຂອງຕົນ ຊຶ່ງເປັນການກະທຳຜິດທາງອາຍາ ເຊັ່ນ ການປອມແປງຕົວເລກບັນຊີ, ການທຳລາຍເອກະສານການເງິນທີ່ກ່ຽວຂ້ອງກັບການກວດສອບແຫ່ງລັດ, ການຮັບສິນບົນ ຫຼື ການກະທຳຜິດໃນສະຖານອື່ນ ກໍຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 74 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ອົງການກວດສອບແຫ່ງລັດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 75 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ ສະບັບເລກທີ 16/ສພຊ ລົງວັນທີ 6 ກໍລະກົດ 2012.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**